# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 17 ມິຖຸນາ 2007 ( 6-17-2007 )**

## ຈົ່ງຈຳໄວ້ວ່າອົງພຣະຜູ້ເປັນເຈົ້າແມ່ນພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ພບຍ 8:1-14,17-18

**ຄຳຖາມຂອງຊີວິດ:** ເຮັດແນວໃດຈຶ່ງຈະຮູ້ໄດ້ຄັກແນ່ວ່າຂ້າພະເຈົ້າຍັງສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າຢູ່?

**ຄວາມຈິງໃນພຣະຄັມພີ:** ອົງພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າ, ແລະບັນດາໄພ່ພົນຂອງພຣະອົງຕ້ອງຈົດຈຳໄວ້ວ່າພຣະອົງເປັນພຣະເຈົ້າທັງໃນສະພາບການທີ່ຫຍຸ້ງຍາກ ແລະໃນສະພາບການທີ່ສະດວກສະບາຍດ້ວຍ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ມີສາມັກຄີທັມອັນເລິກເຊິ່ງຕໍ່ພຣະເຈົ້າໂດຍ:

- ບັນຍາຍຫລັກຖານທີ່ສະແດງວ່າທ່ານໄດ້ເປັນຄົນຈົງຮັກພັກດີຕໍ່ພຣະເຈົ້າ.
- ສັຣເສີນທີ່ພຣະເຈົ້າໄດ້ສັ່ງສອນທ່ານ ແລະເຊັ່ນດຽວກັນກໍສັຣເສີນທີ່ພຣະອົງໄດ້ຈັດຫາທຸກຢ່າງໃຫ້ແກ່ທ່ານ.

ເມື່ອຂ້າພະເຈົ້າຍັງອາຍຸໄດ້ເຈັດປີ, ຂ້າພະເຈົ້າໄດ້ມີເພື່ອນທີ່ສາບານກັນດ້ວຍເລືອດຄົນນຶ່ງ. ຂ້າພະເຈົ້າແລະເພື່ອນຄົນນັ້ນໄດ້ເຄີຍເຫັນພິທີຣະຫວ່າງຄາວບອຍແລະຄົນອິນດຽນສະແດງໃນໂທຣະທັດ, ພວກຂ້າພະເຈົ້າຈຶ່ງໄດ້ພາກັນເຈາະເອົາເລືອດໃນປາຍນິ້ວມືດ້ວຍມີດງັບແລ້ວເອົາເລືອດອອກມາປົນກັນ ເພື່ອວ່າພວກເຮົາຈະໄດ້ເປັນເພື່ອນມິດດ້ວຍທາງເລືອດ. ຕໍ່ມາໃນປີນັ້ນເອງ, ຄອບຄົວຂອງຂ້າພະເຈົ້າກໍໄດ້ຍ້າຍທີ່ຢູ່. ແລະສີ່ສິບເຈັດປີຕໍ່ມາ, ຂ້າພະເຈົ້າກໍບໍ່ສາມາດຈະຈົດຈຳຊື່ເພື່ອນຄົນນັ້ນໄດ້ອີກແລ້ວ.

ໃນທຸກວັນນີ້ຊີວິດກໍເປັນແບບນີ້ແຫລະ. ເພື່ອນຜູ້ທີ່ເຄີຍໃກ້ຊິດກັບເຮົາແຕ່ກ່ອນກໍກັບກາຍມາເປັນຄວາມຈຳທີ່ຈືດຈາງຫາຍໄປ, ພຽງລະຍະທີ່ສັ້ນກວ່າຫ້າສິບປີເທົ່ານັ້ນ. ບາງເທື່ອແມ່ນແມ່ແຕ່ຄວາມຈົງຮັກພັກດີຕໍ່ຄອບຄົວກໍໄດ້ຈືດຈາງຫາຍໄປເຊັ່ນດຽວກັນ. ແລະສຳລັບຄວາມຈົງຮັກພັກດີໃນທີ່ທຳງານກໍດີ, ທັງໃນການຈັດການ ແລະໃນໜ້າວຽກກໍດີ ຄວາມໝາຍຂອງຄຳວ່າຈົງຮັກພັກດີນີ້ກໍຈາງຫາຍໄປ. ມັນມີຫລາຍຄວາມຈົງຮັກພັກດີໃນບັນດາເພື່ອນທີ່ຮັກແພງກັນໃນມະຫາວິທຍາລັຍ, ໃນທີມກິລາ, ສະມາຄົມຣົດແຂ່ງ, ຫລືຄົນທີ່ມີຊື່ສຽງໂດ່ງດັງ. ແຕ່ວ່າຫລາຍຄົນໄດ້ຫລົງລືມຢ່າງສິ້ນເຊີງໃນຄວາມຈົງຮັກພັກດີຕໍ່ພຣະເຈົ້າ. ຂ້າພະເຈົ້າຈະສາມາດມີຄວາມແນ່ໃຈໄດ້ແນວໃດວ່າຂ້າພະເຈົ້າຍັງຄົງຈົງຮັກພັກດີຕໍ່ອົງພຣະຜູ້ເປັນເຈົ້າຄືພຣະເຈົ້າ?

## ສຶກສາພຣະຄັມພີ

### 1. ທ່ານໄດ້ຮ່ຳຮຽນຈາກການຕີສອນຂອງພຣະເຈົ້າບໍ່? ( ພບຍ 8:1-5 )

ດັ່ງທີ່ເຊືອກສາມກຽວຈຶ່ງສາມາດຟັ່ນໃຫ້ມາເປັນເຊືອກເສັ້ນໃຫຍ່ທີ່ໝັ້ນໜຽວໄດ້. ໂມເຊໃນພຣະທັມພຣະບັນຍັດບົດທີ 6-11 ໄດ້ຟັ່ນບົດຮຽນທັງຫລາຍໃນສມັຍອະດີດ, ການໜູນຈິດໜູນໃຈໃນສມັຍປະຈຸບັນ, ແລະການທ້າທາຍສຳລັບອະນາຄົດຢູ່ສເມີ. ບົດຮຽນໃນບົດເຫລົ່ານີ້ອາດໄດ້ບັນຈຸເອົາເຣື່ອງອັນສຳຄັນຕ່າງໆໃນປຶ້ມ ແລະແນ່ນອນທີ່ສຸດແມ່ນໃຈຄວາມທີ່ສຳຄັນທີ່ສຸດໃນພຣະຄັມພີສຳລັບຊາວຢິວ. ພບຍ 6:4-5 ນີ້ໄດ້ຖືກເອີ້ນວ່າ "ເຊມາ" ( ເປັນຄຳເວົ້າພາສາເຮັບເຣີສຳລັບການຟັງດ້ວຍມີການຫວັງຜົນໃຫ້ເຮັດຕາມດ້ວຍຄວາມເຊື່ອຟັງ ) ແລະໄດ້ເຄີຍເວົ້າຕິດປາກກັນມາຕັ້ງຫລາຍໆລ້ານຄົນແລ້ວ, ຈາກສຽງຂອງເດັກນ້ອຍທີ່ເວົ້າບໍ່ຊັດເຈນຈົນເຖິງສຽງຄວນຄາງຂອງພວກຍອມເສັຽສະ

ລະທັງຫລາຍ: “ ຊາວອິສຣາເອັນຈົ່ງຟັງເທີ້ນ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍຊົງເປັນພຣະເຈົ້າອົງດຽວ ແລະ ພວກເຈົ້າຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດຄວາມຄິດ, ແລະດ້ວຍສຸດກໍາລັງຂອງເຈົ້າ. ພຣະບັນຍັດຂໍ້ທີສອງນັ້ນກໍຄື, “ ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ” ( ມຣກ 22:29-31 ).

ໃນພຣະທັມພຣະບັນຍັດບົດທີ 8, ໂມເຊໄດ້ຕັກເຕືອນອິສຣາເອັນເພື່ອເຂົາຈະໄດ້ຕິດຕາມຄໍາສັ່ງສອນທຸກໆຄໍາທີ່ເພິ່ນໄດ້ໃຫ້ກັບເຂົາໃນວັນນີ້ ດ້ວຍຄວາມຣະມັດຣະວັງ. ການປະສານຄວາມຈໍາ, ຄໍາຫມັ້ນສັນຍາໃນອະນາຄົດ, ແລະການທ້າທາຍທັງຫລາຍໃນທຸກວັນນີ້, ໂມເຊໄດ້ບອກໃຫ້ອິສຣາເອັນໄດ້ຈົດຈໍາໄວ້ວ່າອົງພຣະຜູ້ເປັນເຈົ້ານັ້ນຊົງເປັນພຣະເຈົ້າທີ່ໄດ້ນໍາພາພວກເຂົາໃນການເດີນທາງທັງຫມົດສີ່ສິບປີໃນທະເລຊາຍ, ໄດ້ປ່ອຍໃຫ້ເຂົາປະສົບກັບຄວາມທຸກຍາກອັນຫນັກຫນ່ວງໃນຂະນະດຽວກັນນັ້ນກໍໄດ້ຈັດຕຽມສິ່ງທີ່ເຂົາຕ້ອງການທັງຫລາຍເພື່ອໃຫ້ເຂົາລອດຊີວິດຢູ່ໄດ້. ເມື່ອພຣະເຢຊູໄດ້ອົດທົນຕໍ່ຄວາມທໍຣະມານໃນຄວາມຫິວໃນຂະນະທີ່ຖືກການທົດລອງໃນທະເລຊາຍນັ້ນ, ການຕັກເຕືອນທີ່ວ່າພຣະເຈົ້າໄດ້ສັ່ງສອນອິສຣະເອັນດ້ວຍການປ່ອຍໃຫ້ເຂົາອຶດຫິວເສັຽກ່ອນທີ່ຈະໄດ້ແຈກເຂົ້າມານາໃຫ້ທີຫລັງ ສິ່ງນີ້ໄດ້ເຮັດໃຫ້ພຣະເຢຊູສາມາດຕ້ານທານກັບຊາຕານໄດ້ ( ມທ 4:1-4 ).

ໂມເຊໄດ້ຫນູນໃຈອິສຣາເອັນໃຫ້ເກັບສິ່ງນີ້ໄວ້ໃນໃຈ ຄືວ່າອົງພຣະຜູ້ເປັນເຈົ້າໄດ້ສິດສອນພວກເຂົາປຽບດັ່ງພໍ່ຄົນນຶ່ງທີ່ໄດ້ສິດສອນລູກຊາຍຂອງຕົນເອງ. ຄໍາວ່າສິດສອນໄດ້ນໍາມາຊຶ່ງແນວຄິດທີ່ວ່າການສິດສອນແລະການຮໍ່າຮຽນ. ພຣະເຈົ້າໄດ້ປະທານເຂົ້າມານາໃຫ້ເຂົາກິນເພື່ອວ່າພວກອິສຣາເອັນຈະໄດ້ຮຽນຮູ້ວ່າມະນຸດຈະບໍ່ກິນອາຫານແຕ່ສິ່ງດຽວ ແຕ່ວ່າຈະໄດ້ກິນພຣະທັມທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ. ມັນຫມາຍເຖິງວ່າບໍ່ແມ່ນຮຽນພຣະຄັມພີຢ່າງດຽວເທົ່ານັ້ນ ແຕ່ຈະຕ້ອງໄດ້ນໍາພຣະທັມຄັມພີໄປສູ່ການປະຕິບັດເພື່ອຮັບໃຊ້ຊີວິດປະຈໍາວັນ. ການລ້ຽງດ້ວຍພຣະຄໍາຂອງພຣະເຈົ້າມີຄວາມຫມາຍວ່າໄດ້ໃຊ້ຊີວິດຂອງເຮົາດ້ວຍການຟັງຄວາມ ແລະການເພິ່ງພາພຣະອົງ.

ເຖິງແມ່ນວ່າຄວາມຕ້ອງການຝ່າຍຮ່າງກາຍຈະສໍາຄັນກໍຕາມ, ແຕ່ວ່າຄວາມຕ້ອງການທີ່ສໍາຄັນກວ່ານັ້ນແມ່ນຄວາມຮັກອັນດູດດື່ມ, ຄວາມເຕີບໃຫຍ່ຂອງຄວາມສໍາພັນກັບພຣະເຈົ້າ ຊຶ່ງເປັນສິ່ງທີ່ພວກເຮົາໄດ້ຫິວໂຫຍຕໍ່ຄວາມຊອບທັມຂອງພຣະເຈົ້າ. ພວກເຮົາຈະສນອງຕອບຕໍ່ການທົດສອບຂອງສະພາບການຕ່າງໆຢ່າງໃດ? ດັ່ງທີ່ພວກເຮົາເປັນຄຣິສຕຽນ, ພວກເຮົາສາມາດມອງເຫັນການທົດສອບຕ່າງໆວ່າເປັນການສິດສອນຄວາມຮັກຈາກພຣະບິດາຂອງເຮົາ ແລະເປັນການຮຽນຮູ້ຄວາມປະສົງຂອງພຣະອົງຕໍ່ພວກເຮົາໂດຍຜ່ານການທົດສອບເຫລົ່ານັ້ນ.

## ຂ. <u>ທ່ານໄດ້ໄວ້ວາງໃຈໃນພຣະປະສົງຂອງພຣະເຈົ້າບໍ່?</u> ( ພບຍ 8:6-10 )

ອີກເຫດຜົນນຶ່ງທີ່ຊາວອິສຣາເອັນຈະຕ້ອງຮັກສາຄໍາສັ່ງຂອງອົງພຣະຜູ້ເປັນເຈົ້ານັ້ນ ກໍແມ່ນເພາະພຣະເຈົ້າໄດ້ນໍາເອົາເຂົາໄປສູ່ແຜ່ນດິນທີ່ອຸດົມສົມບູນ. ການເດີນຕາມທາງຂອງພຣະອົງນັ້ນແມ່ນຫົນທາງທີ່ອຸປະມາຂຶ້ນເພື່ອບັນຍາຍວິຖີຊີວິດອັນແທ້ຈິງ. ສົມມຸດວ່າທ່ານເອງໄດ້ຍືນຢູ່ໃນທ່າມກາງຊາວອິສຣາເອັນທີ່ຟັງຄໍາສັ່ງສອນຂອງໂມເຊຢູ່. ທ່ານໄດ້ໃຊ້ຊີວິດທັງຫມົດຂອງທ່ານຢູ່ໃນທະເລຊາຍ, ຜິວແຫ້ງຮ່ຽວດ້ວຍລົມພັດ ແລະໄຫມ້ດ້ວຍແສງແດດເຜົາ. ໃນທັນໃດນັ້ນຫູຂອງທ່ານໄດ້ຍິນ! ໂມເຊໄດ້ບັນຍາຍເຖິງແຜ່ນດິນໃຫມ່ທີ່ພຣະເຈົ້າຈະປະທານແກ່ພວກທ່ານ, ແລະມັນກໍເປັນຕາຫນ້າຟັງແທ້ໆ. ມີຫຍັງແດ່ທີ່ໄດ້ເອີ່ຍຂຶ້ນມາທໍາອິດນັ້ນ? ນໍ້າທີ່ບໍ່ໄດ້ຕືອອກມາຈາກກ້ອນຫີນ, ຫລືວ່າເປັນພຽງບວກນ້ອຍໆໃນກາງທະເລຊາຍນັ້ນຄືກັນ. ມັນເປັນສາຍນໍ້າແຫ່ງຊີວິດ, ເປັນນໍ້າອອກບໍ່, ແລະເປັນນໍ້າທີ່ອອກມາຈາກພື້ນດິນເລິກໆ (ບາງທີອາດຈະແມ່ນການປຽບເຖິງນໍ້າສ້າງທີ່ໄດ້ຂຸດແລ້ວຈາກບັນພະບຸຣຸດ ແລະພວກການາອານ) ທີ່ໄດ້ໄຫລທັງເທິງພູເຂົາແລະຮ່ອມຫ້ວຍ.

ທ່ານລອງຄິດເບິ່ງວ່າມັນຈະເປັນການດີພຽງໃດທີ່ຄົນທີ່ອາສັຍຢູ່ແຜ່ນດິນທະເລຊາຍທີ່ແຫ້ງແລ້ງທີ່ໄດ້ຍິນຂ່າວນີ້? ມີເຄື່ອງປູກຂອງຝັງທີ່ດີໆຫລາຍຢ່າງ. ແລະໂມເຊໄດ້ກ່າວເຖິງເຄື່ອງປູກຂອງຝັງຫລາຍຢ່າງທີ່ແຜ່ນດິນໃຫມ່ນັ້ນໄດ້ຜລິດ: ເຂົ້າສາລີ, ເຂົ້າບະເລ, ຫມາກອາງຸ່ນ, ຫມາກເດື່ອ, ຫມາກພິລາ, ຫມາກກອກເທດ, ນໍ້າມັນ ແລະນໍ້າເຜິ້ງ. ຈະບໍ່ມີຄໍາຖາມວ່າ, “ມື້ແລງນີ້ຈະກິນຫຍັງ?” “ເຂົ້າມານາ” “ສໍາລັບເຂົ້າຄາບເຊົ້າເດ?” “ເຂົ້າມານາ” “ເຂົ້າ

ຕອນທີ່ຮຽນເດແມ່ນຫຽັງ?” “ເຂົ້າມານາ”. ທີ່ບ່ອນນີ້ຍັງມີສິ່ງທີ່ດີ ແລະດີຫລາຍອີກ! ມັນຍັງມີທາດເຫລັກ ແລະທາດທອງອີກດ້ວຍໃນແຖບພູເຂົາ ສຳລັບເຮັດເຄື່ອງໃຊ້ເຄື່ອງມື ແລະອາວຸດທັງຫລາຍ. ທ່ານບໍ່ສາມາດຈະທົນຕໍ່ໄປໄດ້ອີກເມື່ອໄດ້ຍິນຄຳຫມັ້ນສັນຍາທີ່ໂມເຊໄດ້ໃຫ້ກັບເຂົາ ແລະຮູ້ວ່າທ່ານຈະບໍ່ລໍຊ້າທີ່ຈະສັຣເສີນພຣະເຈົ້າສຳລັບແຜ່ນດິນອັນອຸດົມສົມບູນທີ່ພຣະເຈົ້າມອບໃຫ້.

ຈົ່ງຈຳໄວ້ວ່າການໃຫ້ແຜ່ນດິນຕໍ່ຊາວອິສຣາເອັນຂອງພຣະເຈົ້ານັ້ນແມ່ນເປັນພຽງສ່ວນນຶ່ງຂອງຈຸດປະສົງທັງຫມົດໃນພຣະສັນຍາ. ບົດທີ 9 ໄດ້ບັນທຶກການຕັກເຕືອນຕໍ່ອິສຣະເອັນວ່າ: ມັນບໍ່ແມ່ນຍ້ອນຄວາມບໍ່ຊອບທັມຂອງອິສຣາເອັນ, ແຕ່ວ່າມັນແມ່ນຄວາມບາບຂອງຊາວການາອານທີ່ເຮັດໃຫ້ພວກເຂົາຖືກໄລ່ອອກຫນີໄປເພາະການທີ່ອິສຣາເອັນມີຈຳນວນຫລາຍກວ່າ. ເພາະອິສຣາເອັນໄດ້ຮັບການຕັກເຕືອນເພາະຄວາມແຂງກະດ້າງດື້ດຶງເພື່ອໃຫ້ເຂົາສືບຕໍ່ເປັນຄົນທີ່ເຊື່ອຟັງພຣະເຈົ້າ.

ເຫມືອນດັ່ງຊາອິສຣາເອັນທີ່ໄດ້ຖືກເຮັດໃຫ້ມີພະລັງຂຶ້ນເພາະການກະຕຸ້ນດ້ວຍຄວາມຫວັງຂອງແຜ່ນດິນໃຫມ່. ການທີ່ພຣະເຈົ້າໃຫ້ຄວາມຫວັງນີ້ ຈະສາມາດໃຫ້ການດຳເນີນຊີວິດຂອງຄຣິສຕຽນໃນຄວາມເຊື່ອມີຄວາມກະຕຸ້ນດີຂຶ້ນ. ພວກເຮົາສາມາດໃຊ້ຊີວິດຢູ່ໄດ້ດ້ວຍຫມັ້ນໃຈ ເມື່ອຮູ້ວ່າພຣະເຈົ້າໄດ້ສະສົມຊີວິດອັນດີໃຫ້ຄົນທີ່ສັດຊື່ຕໍ່ພຣະເຈົ້າແລ້ວ. ຄວາມຕ້ອງການທາງດ້ານເນື້ອກາຍຂອງພວກເຮົາກໍສຳຄັນ, ແຕ່ວ່າຄວາມຕ້ອງການທີ່ສຳຄັນຫລາຍກວ່ານັ້ນແມ່ນການເຕັມໄປດ້ວຍຄວາມຮູ້ສຶກອັນເລິກເຊິ່ງ, ການເຕີບໃຫຍ່ຂອງຄວາມສາມັກຄີທັມກັບພຣະເຈົ້າເມື່ອພວກເຮົາຫາກມີຄວາມອຶດຫິວຝ່າຍຄວາມຊອບທັມຂອງພຣະອົງ ( ມທ 5:6 ).

ເຖິງແມ່ນວ່າພວກເຮົາຈະໄດ້ປະສົບກັບເວລາຮ້າຍກໍຕາມ, ເຊັ່ນການຕົກງານ ຫລືວ່າພົບກັບພັຍທັມມະຊາດ, ຫລືວ່າໄດ້ປະສົບກັບເວລາຊົມຊື່ນຍິນດີ ເຊັ່ນການເກີດຂອງລູກຫລືຫລານ, ຫລືວ່າສະພາບການທີ່ບໍ່ແນ່ນອນເຊັ່ນເວລາໃນການປ່ຽນແປງກໍຕາມ, ພຣະເຈົ້າກໍຍັງເປັນຜູ້ທີ່ໄວ້ວາງໃຈໄດ້ນັ້ນເອງ. ພຣະອົງຊົງຮູ້ຈັກວ່າພວກເຮົາຢືນຢູ່ທີ່ໃດ, ພຣະອົງຊົງຮູ້ວ່າພຣະອົງສົ່ງເຮົາໄປຮອດໃສແລ້ວ, ແລະພຣະອົງກໍຍັງເປັນຜູ້ເຫມາະສົມທີ່ຈະຖືກສັຣເສີນຢູ່.

### 3. <u>ທ່ານໄດ້ຈົດຈຳບໍ່ເກີດແຫ່ງຄວາມສຳເຣັດຂອງທ່ານບໍ່?</u> ( ພບຍ 8:11-14,17-18 )

ໃນຫລາຍປີຜ່ານມານີ້, ຂ້າພະເຈົ້າໄດ້ກວດເບິ່ງ “ລາຍການບັນທຶກຄວາມກົດດັນ”. ປະສົບການບາງຢ່າງຂອງຊີວິດໄດ້ບອກຄຸນຄ່າອັນສຳຄັນ, ແລະຜົນລວມອັນສູງວ່າເປັນເຄື່ອງຫມາຍທີ່ບອກວ່າເປັນຂັ້ນອັນຕລາຍຕໍ່ພະຍາດທີ່ພົວພັນນຳເຊັ່ນຄວາມດັນເລືອດສູງ, ຫົວໃຈວາຍ, ອັມມະພາດ, ຫລືແມ່ນແຕ່ໄຂ້ຫວັດໃຫຍ່ທີ່ສາມາດທຳລາຍລະບົບພູມຕໍ່ຕ້ານພະຍາດຂອງເຮົາໃຫ້ອ່ອນແຮງລົງ. ລອງຄິດເບິ່ງຄວາມຕື່ນເຕັ້ນຂອງຂ້າພະເຈົ້າເມື່ອຂ້າພະເຈົ້າໄດ້ປະສົບເຣື່ອງດີໆຫລາຍເຣື່ອງ, ເຊັ່ນການແຕ່ງງານ ຫລືວ່າໄດ້ຂຶ້ນຂັ້ນ, ວ່າມັນໄດ້ກົດດັນຂ້າພະເຈົ້າແບບດຽວກັນກັບຂ່າວຮ້າຍ, ເຊັ່ນການຕາຍທີ່ເກີດຂຶ້ນໃນຄອບຄົວ ຫລືວ່າການປະຮ້າງ. ( Editor’s Note: For a good stress inventory,check out the Holmes-Rahe Life Stress Inventory at www.bhicares.org/pdf.manual/Indepthassessment/homesrahestressinventory.pdf. )

ຄວາມມັ່ງຄັ່ງສົມບູນກໍສາມາດນຳມາຊຶ່ງຄວາມຕຶງຄຽດໄດ້ເຫມືອນກັນ. ຍິ່ງຮ້າຍໄປກວ່ານັ້ນ, ມັນສາມາດເຮັດໃຫ້ຝ່າຍວິນຍານຂອງພວກເຮົາເກີດຄວາມອວດຕົວ ແລະເຮັດໃຫ້ຄິດວ່າພວກເຮົາບໍ່ຕ້ອງການພຣະເຈົ້າອີກຕໍ່ໄປ. ໂມເຊໄດ້ຕັກເຕືອນຊາວອິສຣາເອັນ ບໍ່ໃຫ້ຫລົງລືມອົງພຣະຜູ້ເປັນເຈົ້າເມື່ອໃດຫາກເຂົາໄດ້ປະສົບກັບຄວາມມັ່ງຄັ່ງສົມບູນຂຶ້ນ. ພວກເຂົາຈະຖືກຫລອກລວງໃຫ້ຫລົງວ່າຕົນມາຈາກໃສ ແລະເຂົາໄດ້ປະສົບກັບອັນໃດມາແດ່. ຍິ່ງຮ້າຍໄປກວ່ານັ້ນ, ພວກເຂົາຈະຖືກຫລອກລວງໃຫ້ເກີດການຖືຕົນຖືຕົວຂຶ້ນ ຄິດວ່າຕົນໄດ້ມັ່ງຄັ່ງຂຶ້ນມານັ້ນກໍເພາະວ່າດ້ວຍຄວາມສາມາດ ແລະດ້ວຍຄວາມພະຍາຍາມຂອງເຂົາເອງ. ໂມເຊໄດ້ບອກວ່າຫາກເຫດການເຊັ່ນນີ້ໄດ້ເກີດມີຂຶ້ນພວກເຂົາຈະຕົກຢູ່ໃນອັນຕະລາຍຂອງການພິພາກສາລົງໂທດແບບດຽວກັນກັບທີ່ໃກ້ຈະເກີດຂຶ້ນກັບພວກການາອານ.

ຄວາມຕັກເຕືອນຂອງໂມເຊຕໍ່ຊາວອິສຣາເອັນໃນຂະນະນັ້ນກໍສາມາດໃຊ້ໄດ້ໃນທຸກວັນນີ້ຄືກັນ: ອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າສາມາດໃຫ້ທ່ານມັ່ງຄັ່ງສົມບູນໄດ້. ຄວາມສຳເຣັດແລະຄວາມຮັ່ງມີບໍ່ໃຊ່ແມ່ນເປັນການອວຍ

ພອນຂອງພຣະເຈົ້າສເມີໄປ; ທັງຍັງບໍ່ໄດ້ເປັນຄວາມບາບຂອງມັນເອງອີກດ້ວຍ. ຄົນຄຣິສຕຽນ ໂດຍສະເພາະຄົນຄຣິສຕຽນຊາວອະເມຣິກາສ່ວນຫລາຍ ຄວນຕ້ອງໃຫ້ຮູ້ຈັກອັນຕະລາຍຂອງການປ່ອຍໃຫ້ຄວາມມັ່ງຄັ່ງສົມບູນນັ້ນດຶງເອົາເຮົາອອກຈາກຄວາມຈົງຮັກພັກດີອັນເລີກເຊິ່ງກັບພຣະເຈົ້າ. ແຕ່ໂຊກຮ້າຍ, ຫລາຍຄົນໄດ້ຄິດໄປວ່າ, “ ອຳນາດແລະຄວາມສາມາດຂອງຂ້ອຍໄດ້ເຮັດໃຫ້ຂ້ອຍມີຄວາມຮັ່ງມີ”. ການເພິ່ງຕົນເອງສາມາດເຮັດໃຫ້ການເພິ່ງພາອາສັຍພຣະເຈົ້າຂອງເຮົາລົດນ້ອຍຖອຍລົງ.

ພຣະເຢຊູໄດ້ສອນດ້ວຍຄຳອຸປະມາເຖິງອັນຕະລາຍຂອງຄວາມຮັ່ງມີ. ເຖິງແມ່ນຄົນອະເມຣິກາທີ່ທຸກທີ່ສຸດກໍຍັງຖືກຖືວ່າເປັນຄົນຮັ່ງມີເມື່ອທຽບໃສ່ຄົນຊາດທັງຫລາຍໃນໂລກ. ຖ້າວ່າພວກເຮົາບໍ່ລະມັດລະວັງ, ພວກເຮົາກໍອາດສາມາດຈະຄິດວ່າ, “ຂ້າພະເຈົ້າຫາສິ່ງທັງຫມົດນີ້ໄດ້”, ຫລືວ່າຮ້າຍໄປກວ່ານີ້, ກໍອາດມີນິສັຍທີ່ວ່າ, " ຂ້ອຍຫາໄດ້ເອງ; ມັນເປັນຂອງຂ້ອຍທີ່ເຮັດໄດ້ຕາມໃຈປາຖນາ.” ນິສັຍເຊັ່ນນີ້ບໍ່ແມ່ນມາຈາກເຈຕະນາຂອງພຣະເຈົ້າ ແລະໄດ້ນຳເຮົາໄປສູ່ອັນຕະລາຍຈາກການພິພາກສາຂອງພຣະເຈົ້າ. ພວກເຮົາຖວາຍກຽດແດ່ອົງພຣະຜູ້ເປັນເຈົ້າວ່າເປັນພຣະເຈົ້າດ້ວຍການຍັງເປັນຄົນທີ່ຖ່ອມຕົວລະຫວ່າງຕົນເອງແລະຄວາມສຳເຣັດຂອງຕົນ ແລະດ້ວຍຈຳໄວ້ວ່າພຣະເຈົ້າໄດ້ມອບສິດໃຫ້ເຮົາເພື່ອໃຫ້ເຮົາເປັນຄົນທີ່ຮັ່ງມີ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.